ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 590/ປທສ.
ນະຄອນຫຼວງວຽງຈັນ, ວັນທີ: 18 MAR 2016

# ຂໍ້ຕົກລົງ
# ວ່າດ້ວຍ ການອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;

**ລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອເປັນການຄຸ້ມຄອງ, ສົ່ງເສີມການດຳເນີນກິດຈະການ ແລະ ພັດທະນາໂຄງລ່າງພື້ນຖານໄອຊີທີ ໃຫ້ມີຄວາມເປັນລະບຽບ, ເອກະພາບ, ມີມາດຕະຖານ ແລະ ຄຸນນະພາບ ແນ່ໃສ່ຮັບປະກັນວຽກງານການນຳໃຊ້ ແລະ ໃຫ້ບໍລິການດ້ານຂໍ້ມູນຂ່າວສານ ຜ່ານລະບົບເຄືອຂ່າຍອິນເຕີເນັດ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ປອດໄພ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມຂອງຊາດ.

**ມາດຕາ 2. ການອະນຸຍາດດຳເນີນກິດຈະການ ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ການອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການອະນຸຍາດໃຫ້ບຸກຄົນ ຫຼື ນິຕິບຸກຄົນ ດຳເນີນກິດຈະການ ເຊົ່າພື້ນທີ່ຕິດຕັ້ງອຸປະກອນ, ເຊົ່າບ່ອນວາງເຄື່ອງເຊີເວີ, ເຊົ່າໃຊ້ເຊີເວີ, ເຊົ່າພື້ນທີ່ເຊີເວີ, ເຊົ່າໃຊ້ຊອບແວຣ, ເຊົ່າໃຊ້ຖານຂໍ້ມູນ ແລະ ອື່ນໆ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ** ໝາຍເຖິງ ລະບົບລວມສູນໂຄງລ່າງພື້ນຖານເຕັກນິກທີ່ປະກອບມີລະບົບອຸປະກອນທີ່ຈໍາເປັນ ເພື່ອສະໜອງບໍລິການ ເຊົ່າພື້ນທີ່ຕິດຕັ້ງອຸປະກອນ, ເຊົ່າບ່ອນວາງເຄື່ອງເຊີເວີ, ເຊົ່າໃຊ້ເຊີເວີ, ເຊົ່າພື້ນທີ່ເຊີເວີ, ເຊົ່າໃຊ້ຊອບແວຣ, ເຊົ່າໃຊ້ຖານຂໍ້ມູນ ແລະ ອື່ນໆ;

2. **ເຊີເວີ(Server)** ໝາຍເຖິງ ຊຸດຄອມພິວເຕີຄວາມໄວສູງທີ່ໃຊ້ໄວ້ເຮັດວຽກສະເພາະ ເພື່ອໃຫ້ບໍລິການຫຼາຍຢ່າງໄດ້ພ້ອມໆກັນ ແລະ ເຮັດວຽກຕະຫຼອດ 24 ຊົ່ວໂມງໄດ້.

3. **ມາດຕະຖານ TIA-942** ໝາຍເຖິງ ມາດຕະຖານກ່ຽວກັບການສ້າງສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ນິຍົມນໍາໃຊ້ເປັນບ່ອນອີງ ຊຶ່ງເນັ້ນໃສ່ ລາຍລະອຽດສະຖານທີ່, ໂຄງສ້າງອາຄານ, ຫ້ອງ, ລະບົບໄຟຟ້າ, ລະບົບຄວາມເຢັນ-ຄວາມຊຸ່ມ, ລະບົບເດີນສາຍໄຟຟ້າ-ສາຍຂໍ້ມູນ, ລະບົບຄວາມປອດໄພເຂົ້າ-ອອກ, ກ້ອງວົງຈອນປິດ, ລະບົບເຕືອນໄພ-ປ້ອງກັນໄພ, ກາໝາຍ, ລະບົບເກັບຂໍ້ມູນຫຼັກ-ສໍາຮອງ, ລະບົບກູ້ຄືນຂໍ້ມູນ ແລະ ອື່ນໆ ໂດຍແບ່ງອອກເປັນ 4 ລະດັບ Tier ຄື: Tier 1, Tier 2, Tier 3 ແລະ Tier 4 (Tier ແມ່ນລະດັບຄວາມສາມາດຂອງລະບົບ).

**ມາດຕາ 4. ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ການອອກອະນຸຍາດ

**ມາດຕາ 5. ໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີ 3 ແບບ ດັ່ງນີ້:

**ແບບທີ 1:** ແມ່ນໃບອະນຸຍາດສໍາລັບຜູ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂະໜາດໃຫຍ່ ທີ່ມີອາຄານສະຖານທີ່ເປັນຂອງຕົນເອງ;

**ແບບທີ 2:** ແມ່ນໃບອະນຸຍາດສໍາລັບຜູ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂະໜາດກາງ ທີ່ບໍ່ມີອາຄານເປັນຂອງຕົນເອງ ແຕ່ມີຫ້ອງເປັນຂອງຕົນເອງ;

**ແບບທີ 3:** ແມ່ນໃບອະນຸຍາດສໍາລັບຜູ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ໃຊ້ພື້ນທີ່ໃນຫ້ອງສູນກາງຂໍ້ມູນຂ່າວສານ ຂອງຜູ້ອື່ນ.

**ມາດຕາ 6. ອາຍຸໃບອະນຸຍາດ**

ອາຍຸໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແບ່ງເປັນ 2 ໄລຍະ ຄື:

1. ໄລຍະທີ 1: ອອກໃບອະນຸຍາດຊົ່ວຄາວ ຊຶ່ງແຕ່ລະແບບມີອາຍຸ 01 ປີ;

2. ໄລຍະທີ 2: ອອກໃບອະນຸຍາດສົມບູນ ຊຶ່ງແຕ່ລະແບບມີອາຍຸ ດັ່ງນີ້:

- ໃບອະນຸຍາດແບບທີ 1 ມີອາຍຸນຳໃຊ້ 05 ປີ;
- ໃບອະນຸຍາດແບບທີ 2 ມີອາຍຸນຳໃຊ້ 03 ປີ;
- ໃບອະນຸຍາດແບບທີ 3 ມີອາຍຸນຳໃຊ້ 02 ປີ;

**ມາດຕາ 7. ການຂໍອະນຸຍາດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຕ້ອງການດຳເນີນກິດຈະການ ສູນກາງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ຕ້ອງຂໍໃບອະນຸຍາດ ນຳຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ).

ຜູ້ຂໍໃບອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະກອບເອກະສານຄົບຖ້ວນ ຕາມທີ່ຂະແໜງ ປທສ ກຳນົດໄວ້ ຄື:

- ໃບຄຳຮ້ອງ;
- ບັດປະຈຳຕົວ/ໜັງສືຜ່ານແດນ;
- ຊີວະປະຫວັດຜູ້ບໍລິຫານ ແລະ ວິຊາການເຕັກນິກ;
- ໃບທະບຽນວິສາຫະກິດ;
- ບົດວິພາກເສດຖະກິດ ແລະ ແຜນຜັງເຕັກນິກ;
- ໃບຢັ້ງຢືນສະຖານະການເງິນ ຈາກທະນາຄານໃນ ສປປ ລາວ;
- ສັນຍາເຊົ່າເຄືອຂ່າຍ, ໂຄງລ່າງພື້ນຖານ ແລະ ອື່ນໆ;
- ເອກະສານອື່ນໆ ຕາມທີ່ຂະແໜງ ປທສ ກຳນົດ.

ໃນກໍລະນີໃຫ້ຜູ້ອື່ນມາຂໍອະນຸຍາດແທນ ຕ້ອງມີເອກະສານມອບສິດ ແລະ ເອກະສານທີ່ກ່ຽວຂ້ອງຢ່າງຄົບຖ້ວນ.

**ມາດຕາ 8. ເງື່ອນໄຂພິຈາລະນາ ອອກໃບອະນຸຍາດ**

ເງື່ອນໄຂໃນການພິຈາລະນາອອກໃບອະນຸຍາດ ດຳເນີນກິດຈະການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດມີດັ່ງນີ້:

1. ຕ້ອງປະກອບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ຕາມການກຳນົດໃນມາດຕາ 7;
2. ຕ້ອງມີວິຊາການທີ່ກ່ຽວຂ້ອງ ຕາມການກຳນົດຂອງຂະແໜງ ປທສ;
3. ໃນກໍລະນີມີການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຕ້ອງມີໃບອະນຸຍາດຈາກຂະແໜງ ປທສ;
4. ຕ້ອງບໍ່ຢູ່ໃນຊ່ວງໄລຍະຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປ ລາວ;
5. ປະຕິບັດຕາມເງື່ອນໄຂອື່ນທີ່ຂະແໜງ ປທສ ກຳນົດໃຫ້.

**ມາດຕາ 9. ໄລຍະເວລາພິຈາລະນາອອກໃບອະນຸຍາດ**

ຂະແໜງ ປທສ ຈະພິຈາລະນາອອກໃບອະນຸຍາດ ຕາມໄລຍະເວລາຂອງແຕ່ລະປະເພດ ດັ່ງລຸ່ມນີ້:

1. ການອອກໃບອະນຸຍາດໃໝ່ :
   - ໃບອະນຸຍາດແບບທີ 1 ໃຊ້ເວລາພິຈາລະນາພາຍໃນ 30 ວັນລັດຖະການ;
   - ໃບອະນຸຍາດແບບທີ 2 ໃຊ້ເວລາພິຈາລະນາພາຍໃນ 20 ວັນລັດຖະການ;
   - ໃບອະນຸຍາດແບບທີ 3 ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ.
2. ການຕໍ່ໃບອະນຸຍາດ :
   - ໃບອະນຸຍາດແບບທີ 1 ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ;
   - ໃບອະນຸຍາດແບບທີ 2 ໃຊ້ເວລາພິຈາລະນາພາຍໃນ 10 ວັນລັດຖະການ;
   - ໃບອະນຸຍາດແບບທີ 3 ໃຊ້ເວລາພິຈາລະນາພາຍໃນ 05 ວັນລັດຖະການ.

ໃນກໍລະນີເອກະສານຂອງຜູ້ຮ້ອງຂໍບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ບໍ່ມີເງື່ອນໄຂພຽງພໍທີ່ຈະໄດ້ຮັບອະນຸຍາດ ຂະແໜງ ປທສ ຈະແຈ້ງໃຫ້ຜູ້ຮ້ອງຂໍຊາບ ພາຍໃນ 05 ວັນລັດຖະການ.

**ມາດຕາ 10. ການພິຈາລະນາອອກໃບອະນຸຍາດສົມບູນ**

ຂະແໜງ ປທສ ຈະພິຈາລະນາອອກໃບອະນຸຍາດສົມບູນ ໃຫ້ແກ່ຜູ້ຮ້ອງຂໍທີ່ມີໃບອະນຸຍາດຊົ່ວຄາວແລ້ວ ແລະ ສາມາດປະຕິບັດໄດ້ຢ່າງໜ້ອຍ 60% ຂອງແຜນດຳເນີນກິດຈະການ.

**ມາດຕາ 11. ການຕໍ່ອາຍຸໃບອະນຸຍາດ**

ການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຍື່ນໃບຄຳຮ້ອງຂໍຕໍ່ ກ່ອນວັນໝົດອາຍຸຢ່າງໜ້ອຍ 30 ວັນ ແລະ ຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງປະກອບເອກະສານຢ່າງຄົບຖ້ວນ ຕາມທີ່ຂະແໜງ ປທສ ກຳນົດໄວ້;
2. ຕ້ອງມີໃບຢັ້ງຢືນການເສຍອາກອນຄົບຖ້ວນຈາກພາກສ່ວນທີ່ກ່ຽວຂ້ອງ;
3. ຖ້າມີການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຕ້ອງມີໜັງສືຢັ້ງຢືນການຊຳລະຄ່າທຳນຽມ ແລະ ຄ່າບໍລິການ;
4. ຜູ້ໄດ້ຮັບໃບອະນຸຍາດຊົ່ວຄາວແລ້ວ ຖ້າຫາກບໍ່ສາມາດປະຕິບັດໄດ້ 60% ຂອງແຜນການໃນປີທຳອິດ ສາມາດຕໍ່ໃບອະນຸຍາດຊົ່ວຄາວໄດ້ອີກພຽງ 01 ຄັ້ງເທົ່ານັ້ນ ໂດຍຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນຕໍ່ຂະແໜງ ປທສ ພິຈາລະນາ.

**ມາດຕາ 12. ການຂໍປ່ຽນແປງ, ໂຈະ ຫຼື ຍຸບເລີກ**

ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ຕ້ອງການປ່ຽນແປງເນື້ອໃນ, ໂຈະ ຫຼື ຍຸບເລີກ ໃບອະນຸຍາດດຳເນີນກິດຈະການຂອງຕົນ ຕ້ອງໄດ້ຂໍອະນຸຍາດຈາກຂະແໜງ ປທສ ກ່ອນ ໂດຍມີການສະເໜີພ້ອມຊີ້ແຈງເຫດຜົນ ຢ່າງເປັນລາຍລັກອັກສອນ.

ມາດຕາ 13. ຂອບເຂດ ການໃຫ້ບໍລິການຂອງໃບອະນຸຍາດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຂໍອະນຸຍາດໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ສາມາດເລືອກເອົາປະເພດບໍລິການຂອງຕົນ ທີ່ກໍານົດໄວ້ໃນເອກະສານຂັດຕິດ.

ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ໄດ້ຮັບໃບອະນຸຍາດ ສາມາດໃຫ້ບໍລິການຕາມປະເພດການບໍລິການທີ່ລະບຸໄວ້ ໃນໃບອະນຸຍາດດໍາເນີນກິດຈະການຂອງຕົນເທົ່ານັ້ນ.

## ໝວດທີ 3
## ມາດຕະຖານເຕັກນິກ ແລະ ຄວາມປອດໄພ

ມາດຕາ 14. ມາດຕະຖານ ສະຖານທີ່

1. ມາດຕະຖານ ທີ່ຕັ້ງ

   ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຕັ້ງຢູ່ໃນສະຖານທີ່ເໝາະສົມ, ບໍ່ແອອັດ, ຮັບປະກັນລົດດັບເພີງ ເຂົ້າ-ອອກ ໄດ້ງ່າຍ.

2. ມາດຕະຖານ ອາຄານ

   ໂຄງສ້າງອາຄານ ຂອງສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງມີຝາອາຄານໜາຢ່າງໜ້ອຍ 20 ຊັງຕີແມັດ, ມີລະບົບປ້ອງກັນໄຟໃໝ້ ແລະ ອື່ນໆ ຕາມມາດຕະຖານ TIA-942 ຫຼື ທຽບເທົ່າ.

3. ມາດຕະຖານຫ້ອງ

   - ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງມີລະບົບໄຟຟ້າຫຼັກ-ສໍາຮອງ, ລະບົບຄວາມເຢັນ-ຄວາມຊຸ່ມ, ລະບົບລະບາຍອາກາດ, ລະບົບເດີນສາຍໄຟຟ້າ-ສາຍຂໍ້ມູນ, ລະບົບຖ້ານໃສ່ເຊີເວີ, ກາໝາຍ ແລະ ອື່ນໆ ຖືກຕ້ອງຕາມລະດັບມາດຕະຖານ TIA-942 ຫຼື ທຽບເທົ່າ;
   - ພື້ນທີ່ຫ້ອງ ຕ້ອງສາມາດຮອງຮັບນໍ້າໜັກໄດ້ບໍ່ຕໍ່າກວ່າ 800 ກິໂລກຼາມ/ຕາແມັດ;
   - ຜູ້ໃຫ້ບໍລິການ ຕ້ອງແຈ້ງບອກຊື່ມາດຕະຖານທີ່ຕົນເອງໃຊ້ ແລະ ກໍານົດລະດັບມາດຕະຖານຂອງຕົນ ເຊັ່ນ: Tier1, Tier2, Tier3 ແລະ Tier4 ຂອງສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ.

ມາດຕາ 15. ມາດຕະຖານເຕັກນິກ

1. ການເຊື່ອມຕໍ່ເຄືອຂ່າຍ

   ຜູ້ດໍາເນີນກິດຈະການ ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງເຊື່ອມຕໍ່ຫາສູນອິນເຕີເນັດແຫ່ງຊາດໂດຍກົງ ຫຼື ຜ່ານຜູ້ໃຫ້ບໍລິການອິນເຕີເນັດ ເພື່ອສະດວກໃນການເຊື່ອມຕໍ່ກັບເຄືອຂ່າຍອື່ນ.

2. ການເກັບຂໍ້ມູນ

   - ຜູ້ໄດ້ຮັບໃບອະນຸຍາດ ຕ້ອງມີອຸປະກອນຕິດຕາມ ແລະ ເກັບກໍາຂໍ້ມູນທັງໝົດ ຂອງລູກຄ້າ ໂດຍອຸປະກອນດັ່ງກ່າວ ຕ້ອງຮັບປະກັນໃຫ້ສາມາດບັນທຶກຂໍ້ມູນ ໄດ້ຢ່າງສະໝໍ່າສະເໝີ, ຖືກຕ້ອງ ແລະ ເຊື່ອຖືໄດ້ ຕາມມາດຕະຖານທີ່ກະຊວງ ປທສ ກໍານົດໄວ້ ໃນແຕ່ລະໄລຍະ;
   - ຕ້ອງມີລະບົບເກັບກໍາຂໍ້ມູນສໍາຮອງ ທີ່ຢູ່ໃນສະຖານະພ້ອມໃຊ້ງານ ເມື່ອລະບົບເກັບຂໍ້ມູນຫຼັກເກີດຂໍ້ຂັດຂ້ອງ ໃນທຸກກໍລະນີ.

3. ອຸປະກອນ

- ອຸປະກອນທີ່ໃຊ້ໃນການບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຖືກຕ້ອງຕາມມາດຕະຖານເຕັກນິກ ໂດຍຜ່ານການກວດສອບ ແລະ ຮັບຮອງມາດຕະຖານ ຕາມທີ່ກະຊວງ ປທສ ກຳນົດ;

- ຜູ້ໄດ້ຮັບໃບອະນຸຍາດ ຕ້ອງບຳລຸງຮັກສາ, ສ້ອມແປງ ແລະ ປັບປຸງ ເຄືອຂ່າຍອິນເຕີເນັດ ແລະ ອຸປະກອນຂອງຕົນ ໃຫ້ຢູ່ສະພາບທີ່ສາມາດໃຊ້ງານ ແລະ ໃຫ້ບໍລິການໄດ້ຢ່າງປົກກະຕິ ແລະ ຕ້ອງສຳຮອງເຄື່ອງ ແລະ ອຸປະກອນທີ່ຈຳເປັນ ເພື່ອສາມາດໃຫ້ບໍລິການໄດ້ຢ່າງມີຄຸນນະພາບ ພ້ອມທັງປະຕິບັດຕາມຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງກະຊວງ ປທສ;

- ອຸປະກອນທັງໝົດ ທີ່ປະກອບເຂົ້າເປັນລະບົບການໃຫ້ບໍລິການ ຕ້ອງຕັ້ງຢູ່ໃນ ສປປ ລາວ;

- ລະບົບອຸປະກອນຕ້ອງປະຢັດພະລັງງານ ແລະ ຮັບປະກັນ ບໍ່ສ້າງມົນລະພິດທາງອາກາດ ແລະ ສຽງລົບກວນ ຕາມລະບຽບການກ່ຽວຂ້ອງ.

4. **ແຜນຜັງເຄືອຂ່າຍສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ຜູ້ໄດ້ຮັບໃບອະນຸຍາດ ຕ້ອງເຮັດແຜນການຕິດຕັ້ງເຄືອຂ່າຍອຸປະກອນຕ່າງໆ ພາຍໃນສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ລວມເຖິງລະບົບປະຕິບັດການຕ່າງໆທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບເຕັກໂນໂລຊີ ແລະ ມາດຕະຖານ ທີ່ກະຊວງ ປທສ ກຳນົດໄວ້ແຕ່ລະໄລຍະ.

5. **ການປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ການປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດເພີ່ມເຕີມ ເຊິ່ງອາດເຮັດໃຫ້ເກີດຜົນກະທົບຕໍ່ຜູ້ຊົມໃຊ້, ຜູ້ໄດ້ຮັບໃບອະນຸຍາດຕ້ອງແຈ້ງໃຫ້ກະຊວງ ປທສ ຮັບຊາບກ່ອນລ່ວງໜ້າ ແລະ ຕ້ອງຫາວິທີທາງໃຫ້ແກ່ຜູ້ຊົມໃຊ້ຂອງຕົນ ສາມາດນຳໃຊ້ໄດ້ປົກກະຕິ ຈຶ່ງສາມາດດຳເນີນການປັບປຸງລະບົບເຄືອຂ່າຍ.

## ມາດຕາ 16. ມາດຕະຖານດ້ານຄວາມປອດໄພ

ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະຕິບັດມາດຕະຖານຄວາມປອດໄພ ດັ່ງນີ້:

- ຕ້ອງມີລະບຽບການລະອຽດ ໃນການຄຸ້ມຄອງ, ການບຳລຸງຮັກສາ ແລະ ລະບົບແກ້ໄຂບັນຫາສຸກເສີນຕ່າງໆ;

- ຕ້ອງມີລະບົບຄວາມປອດໄພເຂົ້າ-ອອກ, ລະບົບກ້ອງວົງຈອນປິດ ແລະ ລະບົບຕິດຕາມການເຮັດວຽກຂອງເຄື່ອງ;

- ຕ້ອງມີລະບົບເຕືອນໄພ ແລະ ລະບົບປ້ອງກັນໄຟໄໝ້;

- ຕ້ອງມີວິທີການທີ່ເໝາະສົມ ແລະ ທັນການ ເພື່ອຮັບປະກັນວ່າຂໍ້ມູນທັງໝົດຂອງຜູ້ໃຊ້ບໍລິການ ມີຄວາມປອດໄພ ແລະ ໄດ້ຮັບການປ້ອງກັນເປັນຢ່າງດີ;

- ຕ້ອງມີລະບົບປ້ອງກັນການໂຈມຕີ (Firewall, Anti-DDOS ແລະ ອື່ນໆ) ທັງຈາກພາຍນອກ ແລະ ພາຍໃນ ເພື່ອຮັບປະກັນຂໍ້ມູນຂອງຜູ້ໃຊ້ບໍລິການ;

- ຕ້ອງມີລະບົບກັ່ນຕອງ ຂໍ້ມູນເຂົ້າອອກ (Filtering) ເພື່ອປ້ອງກັນ ການນຳໃຊ້ສູນຂໍ້ມູນຂ່າວສານ ເປັນບ່ອນກະທຳຄວາມຜິດ ຫຼື ໂຈມຕີຜູ້ອື່ນ.

## ໝວດທີ 4

## ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ

**ມາດຕາ 17. ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍຕໍ່, ປ່ຽນແປງ, ໂຈະ ແລະ ຍຸບເລີກ ການດໍາເນີນກິດຈະການຂອງຕົນ;
2. ໂຈະການບໍລິການຕໍ່ຜູ້ໃຊ້ບໍລິການ ເມື່ອຜູ້ໃຊ້ບໍລິການລະເມີດສັນຍາ ຫຼື ມີພຶດຕິກໍາທີ່ອາດສົ່ງຜົນກະທົບທາງລົບຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ປະຕິບັດຕາມລະບຽບການຂອງ ກະຊວງ ປທສ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍຢູ່ພາຍໃນ ແລະ ອອກສູ່ຕ່າງປະເທດ;
4. ເຄົາລົບສິດ ແລະ ເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍຕ້ອງມີລະບຽບການ ແລະ ລະບົບເຕັກນິກ ເພື່ອຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ;
5. ບໍ່ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ຍົກເວັ້ນມີການສະເໜີຂອງອົງການຈັດຕັ້ງລັດທີ່ມີສິດອໍານາດກ່ຽວຂ້ອງ;
6. ມີເວັບໄຊເປັນຂອງຕົນເອງ ເພື່ອເປັນບ່ອນແຈ້ງຂໍ້ມູນຂ່າວສານຕ່າງໆແກ່ຜູ້ຊົມໃຊ້ ເປັນຕົ້ນ: ລາຄາ, ປະເພດບໍລິການ ແລະ ຕ້ອງຮັບປະກັນຂໍ້ມູນ ໃຫ້ຖືກຕ້ອງກັບການບໍລິການຕົວຈິງໃນແຕ່ລະໄລຍະ;
7. ຮັບປະກັນການໃຫ້ບໍລິການຢ່າງມີຄຸນນະພາບ ແລະ ຖືກຕ້ອງຕາມທີ່ໄດ້ແຈ້ງໃນເວັບໄຊ;
8. ມີມາດຕະການ ໃນການແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງທາງດ້ານເຕັກນິກ ໃຫ້ຜູ້ຊົມໃຊ້ ໂດຍຕ້ອງແຈ້ງຜ່ານເວັບໄຊຂອງຕົນ ແລະ ລະບຸໃນສັນຍາການໃຫ້ບໍລິການແກ່ຜູ້ຊົມໃຊ້ຢ່າງຊັດເຈນ;
9. ລາຍງານກ່ຽວກັບ ການໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງຕົນ ຕາມການກໍານົດຂອງຂະແໜງ ປທສ ຢ່າງເປັນປົກກະຕິ;
10. ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາ ຂອງຂະແໜງ ປທສ;
11. ມອບພັນທະໃຫ້ລັດຕາມລະບຽບກົດໝາຍ;
12. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18. ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ປອດໄພ;
2. ທວງຖາມ ແລະ ຮ້ອງຟ້ອງຜູ້ໃຫ້ບໍລິການຕາມຂັ້ນຕອນຂອງຂະບວນການຍຸຕິທໍາ ເພື່ອໃຫ້ຄວາມເປັນທໍາຕໍ່ການສະໜອງບໍລິການແກ່ຜູ້ຊົມໃຊ້;
3. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ກ່ຽວກັບ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆຂອງຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ;

4. ຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ ຊຶ່ງອາດເປັນຜົນກະທົບຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ທີ່ເປັນການລະເມີດ ຕໍ່ລະບຽບກົດໝາຍ;
5. ຈ່າຍຄ່າບໍລິການຕາມລະບຽບການ;
6. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 19. ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການໃນການອອກໃບອະນຸຍາດດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 20. ຂໍ້ຫ້າມທົ່ວໄປ

ຫ້າມຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ດຳເນີນການຕໍ່ໄປນີ້:

1. ດຳເນີນກິດຈະການໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງ ປທສ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ;
3. ໃຫ້ບໍລິການນອກເໜືອຈາກ ປະເພດການໃຫ້ບໍລິການ, ແບບໃບອະນຸຍາດ ຫຼື ຂອບເຂດມາດຕະຖານເຕັກນິກທີ່ກຳນົດໄວ້;
4. ເຊື່ອມຕໍ່ເຄືອຂ່າຍ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໂຄສະນາໃສ່ຮ້າຍປ້າຍສີຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ລາຍອື່ນ;
6. ການເຄື່ອນໄຫວຕ່າງໆ ທີ່ຂັດຕໍ່ຂໍ້ຕົກລົງສະບັບນີ້ ຫຼື ລະບຽບການອື່ນ ທີ່ກ່ຽວຂ້ອງ;
7. ຜູກຂາດ ຫຼື ກີດກັນ ຜູ້ໃຫ້ບໍລິການລາຍໃໝ່;
8. ອຸດໜູນ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການລາຍຍ່ອຍ.

### ມາດຕາ 21. ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງ

ຫ້າມພະນັກງານຄຸ້ມຄອງ ການດຳເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີພຶດຕິກຳດັ່ງນີ້:

1. ກີດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານກ່ຽວກັບການໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ;

2. ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວກັບຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ;

3. ເປີດເຜີຍຂໍ້ມູນລັບ ຂອງຜູ້ໃຫ້ບໍລິການ;

4. ມີພຶດຕິກໍາອື່ນທີ່ລະເມີດລະບຽບກົດໝາຍ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ໂຈະ ຫຼື ຖອນ ໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 23. ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນໃນກໍລະນີ ດັ່ງນີ້:

1. ພະນັກງານຂອງລັດທີ່ເຮັດວຽກຄຸ້ມຄອງ ບໍ່ໃຫ້ຄວາມສະດວກ, ຊັກຊ້າ, ກົດໜ່ວງທ່ວງດຶງ ໃນການພິຈາລະນາຄໍາຮ້ອງຂໍອະນຸຍາດ ໂດຍບໍ່ມີເຫດຜົນ, ໃຊ້ມາລະຍາດ ແລະ ຄໍາເວົ້າທີ່ບໍ່ເໝາະສົມ;

2. ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ບໍ່ໃຫ້ຄວາມສະດວກແກ່ຜູ້ຊົມໃຊ້ ຫຼື ລະເມີດຂໍ້ຫ້າມໃນສະຖານເບົາ.

### ມາດຕາ 24. ມາດຕະການປັບໃໝ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດໍາເນີນກິດຈະການໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງປທສ ຈະຖືກປັບໃໝ 50,000,000 ກີບ;

2. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 20,000,000 ກີບ;

3. ໃຫ້ບໍລິການນອກເໜືອ ປະເພດການໃຫ້ບໍລິການ ຫຼື ຂອບເຂດພື້ນທີ່ ທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;

4. ຂະຫຍາຍສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ເຊື່ອມຕໍ່ເຄືອຂ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 20,000,000 ກີບ;

5. ໂຄສະນາໃສ່ຮ້າຍປ້າຍສີຜູ້ໃຫ້ບໍລິການອື່ນ ຈະຖືກປັບໃໝ 5,000,000 ກີບ;

6. ບໍ່ສະໜອງຂໍ້ມູນການເຊື່ອມຕໍ່ເຄືອຂ່າຍ ແລະ ສັນຍາການເຊື່ອມຕໍ່ເຄືອຂ່າຍ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕໍ່ຂະແໜງ ປທສ ຈະຖືກປັບໃໝ 10,000,000 ກີບ;

7. ບໍ່ບັນທຶກຂໍ້ມູນການນໍາໃຊ້ ແລະ ລາຍງານຕໍ່ຂະແໜງ ປທສ ຕາມທີ່ໄດ້ກໍານົດໄວ້ ຈະຖືກປັບໃໝ 10,000,000 ກີບ;

8. ປັບປຸງ ແລະ ຂະຫຍາຍເພີ່ມເຕີມ ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເຊິ່ງອາດເຮັດ ໃຫ້ເກີດຜົນກະທົບຕໍ່ຜູ້ຊົມໃຊ້ ໂດຍບໍ່ແຈ້ງໃຫ້ຂະແໜງ ປທສ ຮັບຊາບກ່ອນລ່ວງໜ້າ ຈະຖືກປັບໃໝ 10,000,000 ກີບ;

9. ບໍ່ເລີ່ມດໍາເນີນການພາຍໃນ 01 ປີ ຫຼື ບໍ່ສາມາດປະຕິບັດໃຫ້ໄດ້ຕາມແຜນຢ່າງໜ້ອຍ 60% ຂອງແຜນການແຕ່ລະປີ ຈະຖືກປັບໃໝ 20,000,000 ກີບ;

10. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ ຈະຖືກປັບໃໝ 20,000,000 ກີບ;

11. ຜູ້ໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃຫ້ບໍລິການ ບໍ່ຖືກຕ້ອງຕາມທີ່ໄດ້ສັນຍາ ຫຼື ຕາມທີ່ໄດ້ແຈ້ງຕໍ່ຜູ້ຊົມໃຊ້ ຜ່ານສື່ຕ່າງໆ ຈະຖືກປັບໃໝ 20,000,000 ກີບ;

12. ຕໍ່ໃບອະນຸຍາດດໍາເນີນກິດຈະການຊ້າກ່ອນກໍານົດ 30 ວັນ ຈະຖືກປັບໃໝ 20,000,000 ກີບ.

**ມາດຕາ 25. ມາດຕະການໂຈະ ແລະ ຖອນໃບອະນຸຍາດ**

ຂະແໜງ ປທສ ຈະພິຈາລະນາໂຈະໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ບໍລິການບໍ່ຖືກຕ້ອງຕາມທີ່ໄດ້ລະບຸໄວ້ໃນໃບອະນຸຍາດ;
2. ປອມແປງ ຫຼື ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງຕາມການກໍານົດຂອງຂະແໜງ ປທສ;
3. ບໍ່ຊໍາລະຄ່ານໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
4. ບໍ່ຕໍ່ອາຍຸໃບອະນຸຍາດ ຕາມທີ່ໄດ້ລະບຸໃນຂໍ້ຕົກລົງສະບັບນີ້;
5. ເກັບຄ່າບໍລິການບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກໍານົດໄວ້;
6. ບໍ່ຊໍາລະຄ່າທໍານຽມ, ຄ່າບໍລິການ ຫຼື ອາກອນ ໃຫ້ລັດ ຕາມລະບຽບການ;
7. ຖືກປັບໃໝຕາມມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ຈໍານວນ 02 ຄັ້ງ;
8. ລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ຂະແໜງ ປທສ ຈະພິຈາລະນາຖອນໃບອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ຖືກໂຈະໃບອະນຸຍາດ ແຕ່ບໍ່ມີການປັບປຸງຕາມເງື່ອນໄຂທີ່ຂະແໜງ ປທສ ກໍານົດ;
2. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ດໍາເນີນການພາຍໃນ 01 ປີ ພາຍຫຼັງໄດ້ຕໍ່ໃບອະນຸຍາດຊົ່ວຄາວແລ້ວ;
4. ຖືກປັບໃໝ ຕາມມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ຈໍານວນ 03 ຄັ້ງ;
5. ລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

**ມາດຕາ 26. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ກະຊວງ ປທສ ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີວ່າການ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫຼວງ ພິມມະຈັນ

# ເອກະສານ ຊັດຕິດ

## ປະເພດການໃຫ້ບໍລິການ

ຜູ້ທີ່ຕ້ອງການໃຫ້ບໍລິການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ສາມາດປະກອບຄຳຮ້ອງຂໍສິດໃຫ້ບໍລິການຕາມແຕ່ລະປະເພດ ດັ່ງນີ້:

1. ບໍລິການໃຫ້ເຊົ່າພື້ນທີ່ ສ້າງຫ້ອງສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ **(ສຳລັບໃບອະນຸຍາດແບບທີ 1 ເທົ່ານັ້ນ)**;
2. ບໍລິການໃຫ້ເຊົ່າພື້ນທີ່ ວາງອຸປະກອນຮາດແວ (Co-Location) **(ສຳລັບໃບອະນຸຍາດແບບທີ 1 ແລະ 2)**;
3. ບໍລິການໃຫ້ເຊົ່າພື້ນທີ່ໃນແລັກ (Rack) ເພື່ອຕິດຕັ້ງອຸປະກອນເຊີເວີ (Dedicate Server);
4. ບໍລິການໃຫ້ເຊົ່າລະບົບເຊີເວີທັງແບບຈິງ ແລະ ແບບຈຳລອງ (Virtual Private Server);
5. ບໍລິການ ຄລາວ (Cloud Computing Service);
6. ບໍລິການ ອື່ນໆເຊັ່ນ: Web Hosting, Mail Hosting.

**ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ**

**ທະນົງເດືອນ ຕຸລີທິງ**